LANA

Laotian American National Alliance, Inc.

United States Census 2010

# ການສຳຣວດສຳມະໂນຄົວປີ 2010

## ຄຳຖາມທີ່ເຄີຍຖາມເລື້ອຍໆ

### ເປັນຫຍັງທຸກຄົນຕ້ອງປະກອບສ່ວນໃນໂຄງການສຳຣວດສຳມະໂນຄົວ?

ເພາະວ່າຂໍ້ມູນຈາກການສຳຣວດສຳມະໂນຄົວຈະເປັນຕົວກຳນົດບັນທັດຖານກ່ຽວກັບອະນາຄົດຂອງ ຊຸມຊົນຂອງທ່ານພ້ອມທັງຈະຊ່ວຍເຮັດໃຫ້ການອອກສຽງຂອງທ່ານຢູ່ໃນສະພາດັ່ງຊັດເຈນຂຶ້ນ.

- ຂໍ້ມູນຈາກການສຳຣວດສຳມະໂນຄົວຈະເປັນເຄື່ອງຊ່ວຍຊີ້ແນະວ່າ ຢູ່ສະຖານທີ່ໃດຄວນສ້າງໂຮງຮຽນ, ສ້າງຖນົນ, ສ້າງໂຮງພະຍາບານ, ສ້າງໂຮງລ້ຽງເດັກ, ສ້າງສູນກາງຜູ້ອາວຸໂສ ແລະ ອື່ນໆອີກມາກມາຍ.
- ຝ່າຍທຸຣະກິດການຄ້າຕ່າງໆຈະໃຊ້ຂໍ້ມູນຈາກການສຳຣວດສຳມະໂນຄົວນີ້ເປັນຕົວຊ່ວຍຊີ້ນຳວ່າຄວນ ຕັ້ງຕລາດ, ຕັ້ງສູນການຄ້າ, ປຸກບ້ານພັກໃໝ່ ແລະ ປຸກສ້າງສະຖານອຳນວຍຄວາມສະດວກຕ່າງໆ ຢູ່ແຫ່ງໃດ.
- ເຈົ້າພະນັກງານຂອງຣັຖບານ ຈະໃຊ້ຂໍ້ມູນຈາກການສຳຣວດສຳມະໂນຄົວນີ້ເປັນເຄື່ອງຊີ້ນຳໃນການຈັດສັນເງິນ ຊ່ວຍເຫລືອຕ່າງໆໃຫ້ແກ່ເຂດໃດ ທີ່ມີຄວາມຕ້ອງການສູງກ່ວາໝູ່ ແລະ ໃຫ້ອົງການໃດແດ່.

### ການສຳຣວດສຳມະໂນຄົວໃນປີ 2010 ນີ້ຈະແຕກຕ່າງຈາກການສຳຣວດ ເມື່ອຄັ້ງຜ່ານມານັ້ນຈັ່ງໃດແດ່?

ໃນການສຳຣວດສຳມະໂນຄົວຄັ້ງຜ່ານມາ, ນຶ່ງໃນຫົກຄອບຄົວໄດ້ຮັບແບບຟອມອັນຍາວຢຽດສອບຖາມເຖິງຣາຍລະອຽດກ່ຽວກັບຂໍ້ມູນດ້ານເສຖກິດ ແລະ ສັງຄົມ. ໃນປີ 2010 ນີ້ທຸກໆຫລັງຄາເຮືອນຈະໄດ້ຮັບແບບຟອມແບບສັ້ນໆ ກະທັດຮັດ ແລະງ່າຍໃນການຕອບຄຳຖາມໃຫ້ແລ້ວໄວແລ້ວກໍສົ່ງກັບຄືນ. ຣາຍລະອຽດຂອງຂໍ້ມູນເພີ້ມເຕີມຈະໄດ້ເກັບກຳທຸກປີຈາກພົລເມືອງໃນເປີເຊັນນ້ອຍໆໂດຽຜ່ານອົງການສຳຣວດຊຸມຊົນອາເມຣິກັນ.

### ຂໍ້ມູນທີ່ໂຄງການສຳຣວດສຳມະໂນຄົວເກັບກຳໄດ້ນີ້ຈະເກັບໄວ້ເປັນຄວາມລັບບໍ່?

ແມ່ນແລ້ວ. ພະນັກງານຂອງໂຄງການສຳຣວດສຳມະໂນຄົວທຸກຄົນໄດ້ສາບານຕົນວ່າຈະປົກປ້ອງຄວາມລັບຂອງຂໍ້ມູນຈາກການສຳຣວດສຳມະໂນຄົວນີ້ໄວ້ຕລອດຊົ່ວຊີວິດ. ຖ້າຫາກມີການຝ່າຝືນຈະຕ້ອງຖືກຈຳຄຸກເປັນເວລາເຖິງຫ້າປີຫລືທັງຈຳທັງປັບໃໝເປັນເງິນເຖິງ 250,000 ດອລລ່າ. ຕາມຕົວບົດກົດໝາຍແລ້ວ, ໂຄງການສຳຣວດສຳມະໂນຄົວບໍ່ມີສິດຈະເປີດເຜີຍຂໍ້ມູນສ່ວນຕົວບຸກຄົນໃຫ້ໃຜຟັງເລີ້ຽ ລວມທັງສຳນັກງານສັງຄົມສົງເຄາະແລະສຳນັກງານເຈົ້າໜ້າທີ່ກວດຄົນເຂົ້າເມືອງ.

L A N A

Laotian American National Alliance, Inc.

United States® Census 2010

# 2010 CENSUS: Frequently Asked Questions

## Why should everyone participate in the 2010 Census?

Census data shape the future of your community and define your voice in Congress.

- Census information helps determine locations for schools, roads, hospitals, child-care and senior citizen centers, and more.
- Businesses use census data to locate supermarkets, shopping centers, new housing and other facilities.
- Government officials use census data to allocate funding and grants to high-need areas and non-profit organizations.

## How will the 2010 Census differ from previous census efforts?

In the last census, one in six households received a long questionnaire asking for detailed socioeconomic information. In 2010, every residence will receive a short questionnaire that is simple and fast to complete and return. More detailed information will be collected annually from a small percentage of the population through the American Community Survey.

## Will the information the Census Bureau collects remain confidential?

Yes. Every Census Bureau worker takes an oath for life to protect the confidentiality of census responses. Violation would result in a jail term of up to five years and/or fine of up to $250,000. By law, the Census Bureau cannot share an individual's answers with anyone, including welfare and immigration agencies.